JDB
ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 1587/ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 22 ມິຖຸນາ 2026

ແຈ້ງການ

ເຖິງ: ທ່ານ ຜູ້ຖືຮຸ້ນ ແລະ ນັກລົງທຶນ ຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ.
ທ່ານ ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ.

ເລື່ອງ: ການແຈ້ງຜົນການປ່ຽນແປງໃບທະບຽນວິສາຫະກິດ ຄັ້ງທີ 8 ຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ ກ່ຽວກັບການເພີ່ມທຶນຈົດທະບຽນ ໂດຍການນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນ (Share Premium) ເພື່ອອອກຮຸ້ນລາງວັນ (Bonus Issue) ໃຫ້ແກ່ຜູ້ຖືຮຸ້ນ.

- ອີງຕາມ ມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ), ສະບັບເລກທີ 067/ທຄຮ, ລົງວັນທີ 29 ເມສາ 2026;
- ອີງຕາມ ໃບອະນຸຍາດການເພີ່ມທຶນຈົດທະບຽນ ໂດຍນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນຈາກການອອກຈຳໜ່າຍຮຸ້ນເພີ່ມທຶນ, ສະບັບເລກທີ 16/ສຄຄຊ, ລົງວັນທີ 28 ພຶດສະພາ 2026;
- ອີງຕາມ ໃບທະບຽນວິສາຫະກິດ ຂອງທະນາຄານຮ່ວມພັດທະນາ ມະຫາຊົນ ສະບັບປ່ຽນແປງ ຄັ້ງທີ 8, ເລກທີ 055293/ກທວ, ລົງວັນທີ 05/06/2026.

ຜູ້ອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ຂໍແຈ້ງມາຍັງທ່ານ ຜູ້ຖືຮຸ້ນ ແລະ ນັກລົງທຶນ ເພື່ອຊາບວ່າ, ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ທີ່ໄດ້ຈັດຂຶ້ນໃນວັນທີ 29 ເມສາ 2026 ຜ່ານມາ ໄດ້ມີມະຕິຮັບຮອງແຜນເພີ່ມທຶນຈົດທະບຽນ ໂດຍການນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນ (Share Premium) ຈຳນວນ 375,000,000,000 ກີບ ແລະ ອອກຮຸ້ນລາງວັນ (Bonus Issue) ໃຫ້ແກ່ຜູ້ຖືຮຸ້ນເດີມ ໃນອັດຕາ 2 ຮຸ້ນເດີມ ຕໍ່ 1 ຮຸ້ນໃໝ່, ດ້ວຍຄະແນນສຽງ 99.99% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ; ແລະ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກໃບອະນຸຍາດການເພີ່ມທຶນຈົດທະບຽນ ໂດຍນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນເພື່ອອອກຮຸ້ນລາງວັນໃຫ້ແກ່ ທຄຮ.

ດັ່ງນັ້ນ, ທຄຮ ຈຶ່ງໄດ້ດຳເນີນການປ່ຽນແປງໃບທະບຽນວິສາຫະກິດ ຄັ້ງທີ 8, ເລກທີ 055293/ກທວ, ລົງວັນທີ 05/06/2026 ສຳເລັດ ໂດຍໄດ້ຮັບການຮັບຮອງການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຈາກກະຊວງອຸດສາຫະກຳ ແລະ ການຄ້າ, ມີລາຍລະອຽດ ດັ່ງລຸ່ມນີ້:

ລາຍລະອຽດ	ກ່ອນການປ່ຽນແປງ	ຫຼັງການປ່ຽນແປງ
ທຶນຈົດທະບຽນ	750,000,000,000 ກີບ	1,125,000,000,000 ກີບ
ມູນຄ່າຮຸ້ນ (Par Value)	1,000 ກີບ/ຮຸ້ນ	1,000 ກີບ/ຮຸ້ນ
ຈຳນວນຮຸ້ນທັງໝົດ	750,000,000 ຮຸ້ນ	1,125,000,000 ຮຸ້ນ
ຈຳນວນຮຸ້ນທີ່ຊື້-ຂາຍໄດ້	75,333,900 ຮຸ້ນ	113,000,850 ຮຸ້ນ
ອັດຕາຮຸ້ນລາງວັນ	-	2 ຮຸ້ນເດີມ : 1 ຮຸ້ນໃໝ່

ປັດຈຸບັນ, ທຄຮ ກຳລັງດຳເນີນຂັ້ນຕອນການຂໍຈົດທະບຽນ, ຂຶ້ນທະບຽນ ແລະ ຝາກຮຸ້ນທີ່ອອກໃໝ່ ຢູ່ຕະຫຼາດຫຼັກຊັບລາວ ຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ທະນາຄານຮ່ວມພັດທະນາ ມະຫາຊົນ
ຜູ້ອຳນວຍການ

ທະນາຄານ ແຫ່ງ ສປປ ລາວ
ທະນາຄານ ຮ່ວມພັດທະນາ ມະຫາຊົນ
JOINT DEVELOPMENT BANK Public
ນະຄອນ ຫຼວງ ວຽງຈັນ

ສາຄອນ ຍໍພັນໄຊ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໃບທະບຽນວິສາຫະກິດ

ເລກທີ 055293/ຈທວ

(ວັນສ້າງຕັ້ງວິສາຫະກິດ: 21/01/1989, ປ່ຽນແປງຄັ້ງທີ 8)

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຄຳຮ້ອງປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ສະບັບລົງວັນທີ 05/06/2026.

ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມຄຸ້ມຄອງວິສາຫະກິດ ໄດ້ຂຶ້ນທະບຽນວິສາຫະກິດ ຮັບຮອງການສ້າງຕັ້ງ ວິສາຫະກິດເປັນ ນິຕິບຸກຄົນ ຕາມກົດໝາຍວ່າດ້ວຍວິສາຫະກິດ ດັ່ງນີ້:

- ຊື່ວິສາຫະກິດເປັນພາສາລາວ: ບໍລິສັດ ທະນາຄານ ຮ່ວມພັດທະນາ ມະຫາຊົນ
- ຊື່ວິສາຫະກິດເປັນພາສາອັງກິດ: JOINT DEVELOPMENT BANK Public Company
- ຮູບແບບວິສາຫະກິດ: ບໍລິສັດມະຫາຊົນ
- ຜູ້ອຳນວຍການ: ທ່ານ ສາຄອນ ຍໍພັນໄຊ, ສັນຊາດ ລາວ
- ທຶນຈົດທະບຽນ: 1,125,000,000,000.00 ກີບ (ໜຶ່ງພັນໜຶ່ງຮ້ອຍຊາວຫ້າຕື້ກີບ)
- ທີ່ຕັ້ງສຳນັກງານ: ອາຄານເລກທີ 82, ຖະໜົນ ລ້ານຊ້າງ, ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ
- ເລກລະຫັດວິສາຫະກິດ, ເລກປະຈຳຕົວຜູ້ເສຍອາກອນ: 684444643900
- ຜູ້ຖືຮຸ້ນ ລະບຸໄວ້ດ້ານຫຼັງໃບທະບຽນວິສາຫະກິດ.

ທີ່ ນະຄອນຫຼວງວຽງຈັນ, ວັນທີ 05/06/2026

ເຈົ້າໜ້າທີ່ທະບຽນວິສາຫະກິດ

ອະພິສິດ ແສງສຸລິວົງ

ໝາຍເຫດ:

ປ່ຽນແປງໃບທະບຽນວິສາຫະກິດ ສະບັບເລກທີ 035528/ຈທວ, ລົງວັນທີ 20/11/2025 ເນື່ອງຈາກ ເພີ່ມທຶນຈົດທະບຽນ ແລະ ເພີ່ມຈຳນວນຮຸ້ນ.

ເນື້ອໃນທະບຽນວິສາຫະກິດ ບໍລິສັດ ທະນາຄານ ຮ່ວມພັດທະນາ ມະຫາຊົນ (ປ່ຽນແປງຄັ້ງທີ 8)
ເລກລະຫັດວິສາຫະກິດ, ເລກປະຈຳຕົວຜູ້ເສຍອາກອນ 684444643900

1. ສາຂາບໍລິສັດມະຫາຊົນ ມີດັ່ງນີ້: (ບໍ່ມີ)

2. ຜູ້ອຳນວຍການ ມີດັ່ງນີ້:

ກ. ຜູ້ຖືຮຸ້ນເປັນຜູ້ອຳນວຍການ: (ບໍ່ມີ)

ຂ. ບຸກຄົນພາຍນອກເປັນຜູ້ອຳນວຍການ:

1) ທ່ານ ສາຄອນ ຍໍພັນໄຊ, ສັນຊາດ ລາວ, ໝາຍເລກໂທລະສັບ +85620 22234517

2) ທ່ານ ວິລັນເດດ ໄວຍະສິມສັກ, ສັນຊາດ ລາວ, ໝາຍເລກໂທລະສັບ +85620 59952999

3) ທ່ານ ຈັນທະພອນ ຈັນທະວົງ, ສັນຊາດ ລາວ, ໝາຍເລກໂທລະສັບ +85620 59557733

4) ທ່ານ ຈັນຊະນະ ສີງຫາວົງ, ສັນຊາດ ລາວ, ໝາຍເລກໂທລະສັບ 020 91117889

5) ນາງ ຄອນສະຫວັນ ວິຊາເທບ, ສັນຊາດ ລາວ, ໝາຍເລກໂທລະສັບ 020 55642469

6) ນາງ ນິດຕາ ນາມມະວົງ, ສັນຊາດ ລາວ, ໝາຍເລກໂທລະສັບ 020 22612829

7) ທ່ານ ໄຊ ບຸລິມມະວົງ, ສັນຊາດ ລາວ, ໝາຍເລກໂທລະສັບ 020 55988966

8) ທ່ານ ວິລະພົງ ພິຈິດ, ສັນຊາດ ລາວ, ໝາຍເລກໂທລະສັບ 020 56261941

3. ທຶນຈົດທະບຽນ ມີ: 1,125,000,000,000.00 ກີບ, ໃນນີ້:

- ເປັນເງິນ: 1,125,000,000,000.00 ກີບ
- ເປັນວັດຖຸ: (ບໍ່ມີ)

4. ຮຸ້ນ ມີທັງໝົດ: 1,125,000,000 ຮຸ້ນ, ແຕ່ລະຮຸ້ນ ມີມູນຄ່າ: 1,000.00 ກີບ

5. ຜູ້ຖືຮຸ້ນ ມີດັ່ງນີ້:

1) ຊື່ເກົ່າ:ບໍລິສັດ ສີເມືອງກຣຸບ ຈຳກັດຜູ້ດຽວ;ຊື່ໃໝ່:ບໍລິສັດ ເອັດເອັມຈີ ກຣຸບ ຈຳກັດຜູ້ດຽວ, ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍປະເທດ ສປປ ລາວ (ຜູ້ຕາງໜ້າ: ທ່ານ ເອກະພັນ ພະພິທັກ, ສັນຊາດ ລາວ), ຈຳນວນຮຸ້ນທີ່ຈອງ: 951,279,202 ຮຸ້ນ, ສັດສ່ວນການຖືຮຸ້ນ 84.558151%

- ໝາຍເລກໂທລະສັບ: 021453612

2) ນາງ ກັນຍາ ພິຈິດ, ສັນຊາດ ລາວ, ຈຳນວນຮຸ້ນທີ່ຈອງ: 45,539,962 ຮຸ້ນ, ສັດສ່ວນການຖືຮຸ້ນ 4.047997%

- ໝາຍເລກໂທລະສັບ: +85620 59999996

3) ທ່ານ ພູໄຊຊະນະ ໄຊສົມບັດ , ສັນຊາດ ລາວ, ຈຳນວນຮຸ້ນທີ່ຈອງ: 15,179,986 ຮຸ້ນ, ສັດສ່ວນການຖືຮຸ້ນ 1.349332%

- ໝາຍເລກໂທລະສັບ: +85620 23988888

4) ທ່ານ ຜູ້ຖືຮຸ້ນທີ່ຊື້ຮຸ້ນຜ່ານຕະຫຼາດຫຼັກຊັບລາວ -, ສັນຊາດ ລາວ, ຈຳນວນຮຸ້ນທີ່ຈອງ: 113,000,850 ຮຸ້ນ, ສັດສ່ວນການຖືຮຸ້ນ 10.04452%

- ໝາຍເລກໂທລະສັບ: 021 2135316

6. ວັດຖຸປະສົງຂອງການດຳເນີນທຸລະກິດ (ໃນການແຈ້ງຂຶ້ນທະບຽນວິສາຫະກິດເບື້ອງຕົ້ນ):

- ບໍລິການດ້ານທະນາຄານ.

(ວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວ ກ່ອນຈະດຳເນີນທຸລະກິດຕາມວັດຖຸປະສົງຂອງຕົນ ຕ້ອງຂໍອະນຸຍາດລົງທຶນ ແລະ/ຫຼື ຂໍອະນຸຍາດດຳເນີນທຸລະກິດ ຫຼື ສາມາດດຳເນີນທຸລະກິດໄດ້ເລີຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ).